ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 3585 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 13/09/18

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ລັດຖະມົນຕີຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກ່ຽວກັບວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ ແລະ ນະຄອນຫຼວງ ຂຽນດ້ວຍຕົວອັກສອນຫຍໍ້ວ່າ "ຮສສ.ຂ", "ຮສສ.ນຫຼ" ສັງກັດໃນໂຄງປະກອບກົງຈັກຂອງອົງການປົກຄອງແຂວງ, ນະຄອນຫຼວງ, ຊຶ່ງມີສາຍຕັ້ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ອົງການການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຄຸ້ມຄອງ-ບໍລິຫານວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງແຂວງ, ນະຄອນຫຼວງ.

## ໝວດທີ 2

### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ, ລະບຽບການຂອງ ກະຊວງ ແລະ ຂອງແຂວງ, ນະຄອນຫຼວງ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ເຂົ້າໃນວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ;
2. ເຜີຍແຜ່ນະໂຍບາຍ, ກົດໝາຍ, ດຳລັດ, ບົດແນະນຳ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;
3. ຊຸກຍູ້, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ອົງການຈັດຕັ້ງຂອງລັດ, ທຸລະກິດບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສາກົນ ປະກອບສ່ວນໃນການພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ພາຍໃນແຂວງ, ນະຄອນຫຼວງ;
4. ຄົ້ນຄວ້ານຳສະເໜີຂັ້ນເທິງພິຈາລະນາອະນຸມັດສ້າງຕັ້ງ, ຕໍ່ ຫຼື ຍຸບເລີກວິສາຫະກິດບໍລິການຈັດຫາງານ, ສູນພັດທະນາສີມືແຮງງານ ທີ່ຂຶ້ນກັບແຂວງ, ນະຄອນຫຼວງ ຕາມການແບ່ງຂັ້ນຄຸ້ມຄອງ;
5. ເປັນເຈົ້າການຄົ້ນຄວ້າ, ຕິດຕາມ, ຊຸກຍູ້ ແລະ ກວດກາການສ້າງ ແລະ ພັດທະນາສີມືແຮງງານ ຂອງບັນດາຫົວໜ່ວຍແຮງງານຕ່າງໆ ຕໍ່ຜູ້ອອກແຮງງານ ໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍວ່າດ້ວຍແຮງງານ;
6. ເກັບກຳສະຖິຕິຂົງເຂດລັດບໍລິຫານ, ວິຊາການ, ຫົວໜ່ວຍການຜະລິດທຸລະກິດ, ຜູ້ມີວຽກເຮັດງານທຳ, ຜູ້ຕ້ອງການມີວຽກເຮັດງານທຳ, ຜູ້ຕ້ອງການຍົກລະດັບສີມືແຮງງານ ແລະ ຂໍ້ມູນດ້ານແຮງງານອື່ນໆ ພ້ອມທັງພິຈາລະນາອອກໜັງສືຢັ້ງຢືນການວ່າງງານ ພາຍໃນທ້ອງຖິ່ນຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ;
7. ປະສານສົມທົບ ແລະ ຊຸກຍູ້ຫົວໜ່ວຍແຮງງານທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ໃນການຝຶກອົບຮົມຍົກລະດັບສີມືແຮງງານ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃຫ້ກຳລັງແຮງງານລາວຢູ່ພາຍໃນແຂວງ, ນະຄອນຫຼວງ;
8. ເປັນຈຸດບໍລິການຈັດຫາງານ, ຄຸ້ມຄອງລະບົບຖານຂໍ້ມູນ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຕະຫຼາດແຮງງານ, ການຈັດຫາວຽກເຮັດງານທຳ ແລະ ການພັດທະນາສີມືແຮງງານ ຢູ່ພາຍໃນແຂວງ, ນະຄອນຫຼວງ;
9. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ຄຸ້ມຄອງ, ກວດກາ ການນຳໃຊ້ແຮງງານພາຍໃນ ແລະ ແຮງງານຕ່າງປະເທດ ກ່ຽວກັບເງື່ອນໄຂການອອກແຮງງານ, ສະພາບແວດລ້ອມ, ຄວາມປອດໄພ, ສຸຂະພາບ ແລະ ສະຫວັດດີການແຮງງານ ຢູ່ພາຍໃນ ແຂວງ, ນະຄອນຫຼວງ;
10. ເປັນຕົວແທນໃນການໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບແຮງງານທີ່ເກີດຂຶ້ນ ລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຢູ່ພາຍໃນ ແຂວງ, ນະຄອນຫຼວງ ຕາມກົດໝາຍວ່າດ້ວຍແຮງງານ;